ກຸ່ມພີງສະຫວັນ-ປິໂຕຣເທຣດ ຈັດໂຄງການ ປັນນ້ຳໃຈຊ່ວຍເຫຼືອຜູ້ປະສົບໄພໜາວ ປີ 10 ໄປຍັງເມືອງຄຳ ແລະ ເມືອງໜອງແຮດ ແຂວງຊຽງຂວາງ ລະຫວ່າງ

ວັນທີ 21-24 ມັງກອນ 2021



ຂະບວນຄາລາວານ ປັນນ້ຳໃຈຊ່ວຍເຫຼືອຜູ້ປະສົບໄພໜາວ ປີ 10 ຂອງພວກເຮົາໄດ້ເດີນທາງອອກຈາກ ນະຄອນຫຼວງວຽງຈັນ ໂດຍມີລົດກະບະນຳຂະບວນ 8 ຄັນ ທີ່ມາຈາກ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ, ບໍລິສັດ ສິດທິໂລຈິສຕິກ ລາວ ຈຳກັດ, ບໍລິສັດ ຂ້ອນໃຈ ການຄ້າ ຈຳກັດ ແລະ ບໍລິສັດໃນເຄືອ ກຸ່ມພີງສະຫວັນ ໄດ້ບັນທຸກເຄື່ອງຂອງປັດໃຈຕ່າງໆ ເພື່ອມຸ່ງໜ້າໄປຊ່ວຍເຫຼືອພີ່ນ້ອງຜູ້ປະສົບໄພໜາວ ຕາມກຸ່ມບ້ານເປົ້າໝາຍ ທີ່ຕ້ອງການຄວາມຊ່ວຍເຫຼືອທາງດ້ານວັດຖຸປັດໃຈ ໃນການຊ່ວຍບັນເທົາຄວາມໜາວ ຈາກສະພາວະອາກາດທີ່ມີຄວາມໜາວ ໂດຍອຸນນະພູມລົງຕ່ຳເຖິງ 0 ອົງສາ ທາງ ເມືອງ ໜອງແຮດ ແລະ ເມືອງ ຄຳ, ແຂວງຊຽງຂວາງ ໃນນີ້ພວກເຮົາໄດ້ນຳເອົາເຄື່ອງມາຊ່ວຍພີ່ນ້ອງບັນເທົາຄວາມໜາວຄື: ຜ້າຮົ່ມ 1,400 ຜືນ, ຖົງຕີນ, ຖົງມື, ໝວກແລນ, ເກີບ, ຊຸດເຄື່ອງນຸ່ງກັນໜາວ ແລະ ວັດຖຸປັດໃຈຕ່າງໆ ລວມມູນຄ່າທັງໝົດ 100 ລ້ານກີບ.



ໃນວັນທີ 21-22 ມັງກອນ 2021, ຄະນະພວກເຮົາໄດ້ເດີນທາງສົມທົບ ໂດຍການເປັນກຽດເຂົ້າຮ່ວມໂດຍ ທ່ານ ຈັນເຜີຍ ໄຊຍະວົງ, ຫົວໜ້າຫ້ອງວ່າການເມືອງຄຳ ພ້ອມດ້ວຍ ພະນັກງານຜູ້ປະສານງານຈາກ ພະແນກ ແຮງງານ ແລະ ສະຫວັດດີການສັງຄົມ ເມືອງຄຳ ແລະ ເດີນທາງໄປມອບເຄື່ອງຊ່ວຍເຫຼືອແກ່ປະຊາຊົນໃນໝູ່ບ້ານທຸກຍາກເປົ້າໝາຍຄື:

- ບ້ານນາພັນ 122 ຄອບຄົວ;
- ບ້ານສຳພັນໄຊ 191 ຄອບຄົວ;
- ບ້ານສົບອໍ່ 70 ຄອບຄົວ;
- ບ້ານນາມອນ-ປຸງບ່ອງ 40 ຄອບຄົວ;
- ບ້ານນາຫຼວງ 72 ຄອບຄົວ;
- ບ້ານນາໄຊຊາຍ 113 ຄອບຄົວ;
- ບ້ານບອມພຽງ 34 ຄອບຄົວ;
- ບ້ານທ່າ 106 ຄອບຄົວ.



ສະເພາະເມືອງຄຳ ລວມມູນຄ່າທັງໝົດທີ່ເປັນເຄື່ອງຂອງປັດໃຈສູ້ໄພໜາວມູນຄ່າ 50 ລ້ານກີບ. ກ່ອນກັບຈາກເມືອງຄຳ ທ່ານ ຈັນເພັຍ ໄຊຍະວົງ, ຫົວໜ້າຫ້ອງວ່າການເມືອງຄຳ ຕາງໜ້າໃຫ້ທ່ານເຈົ້າເມືອງ ເມືອງຄຳ ໄດ້ມອບໃບກຽດຕິຄຸນໃຫ້ກັບຄະນະພວກເຮົາ ກ່ອນຈະເດີນທາງໄປຍັງເມືອງໜອງແຮດຕໍ່ໄປ.



ວັນທີ 22-23 ມັງກອນ 2021 ຄະນະພວກເຮົາໄດ້ເຂົ້າພົບປະກັບ ທ່ານ ຄຳແພງ ສີຊົມພູ ເຈົ້າເມືອງ ເມືອງ ໜອງແຮດ ເຊິ່ງໄດ້ໃຫ້ກຽດຕ້ອນຮັບ ແລະ ໄດ້ມອບໃບກຽດຕິຄຸນແກ່ຄະນະພວກເຮົາກ່ອນທີ່ຈະອອກເດີນທາງໄປມອບເຄື່ອງແກ່ປະຊາຊົນໝູ່ບ້ານເປົ້າໝາຍຕໍ່ໄປ. ເຊັ່ນດຽວກັບການຊ່ວຍເຫຼືອປະຊາຊົນເຂດເມືອງ ຄຳ ພວກເຮົາໄດ້ນຳເອົາ ຜ້າຮົ່ມ, ເຄື່ອງນຸ່ງກັນໜາວ, ຖົງຕີນ, ຖົງມື, ໝວກ ແລະ ເກີບ ພ້ອມທັງວັດຖຸສິ່ງຂອງຕ່າງໆໄປມອບໃຫ້ປະຊາຊົນໃນເຂດທຸລະກັນດານຄື:

- ບ້ານແກ້ວກ່ອງ 38 ຄອບຄົວ;
- ບ້ານຜາພູ 47 ຄອບຄົວ;
- ບ້ານຜາເພີ 34 ຄອບຄົວ;
- ບ້ານຖ້ຳຫີບ 70 ຄອບຄົວ;
- ບ້ານກຳມອນ 37 ຄອບຄົວ;
- ບ້ານກຳຫາດ 46 ຄອບຄົວ;
- ບ້ານຍອດຊາວ 32 ຄອບຄົວ;
- ບ້ານຜາເມົາ 97 ຄອບຄົວ.



ສະເພາະເມືອງໜອງແຮດ ລວມມູນຄ່າທັງໝົດທີ່ເປັນເຄື່ອງຂອງປັດໃຈສູ້ໄພໜາວມູນຄ່າ 50 ລ້ານກີບ. ລວມແລ້ວຂະບວນຄາລາວານຄັ້ງນີ້ໄດ້ໄປຮອດໄປເຖິງປະຊາຊົນຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອຢ່າງແທ້ຈິງ ເຖິງຈະໜ້ອຍແຕ່ຄະນະພວກເຮົາກໍ່ຫວັງວ່າຈະຊ່ວຍບັນເທົາທຸກຈາກໄພໜາວສ່ວນໃດໜຶ່ງແກ່ພີ່ນ້ອງຜູ້ປະສົບໄພໄດ້ບໍ່ຫຼາຍກໍ່ໜ້ອຍ.








PetroTrade
9680
9090


PTL
HOLDING
06


KHOUANKHAY TRADING











